# ໂຄງການອາຫານການກິນຂອງຕະລາດສວນຜັກສຳລັບຜູ້ອາວຸໂສ

LA

## ຄຳຖາມທີ່ຖືກຖາມກັນຢູ່ເລື້ອຍໆ




### ຈະໃຊ້ບັດສະວັດດີການ SFMNP ຂອງທ່ານໄດ້ຢ່າງໃດ

1. ຖືເອົາບັດສະວັດດີການ SFMNP ຂອງທານໄປ ຫາຕະລາດສວນຜັກທີ່ເຂົ້າຮ່ວມນຳ.
2. ເລືອກເອົາອາຫານທີ່ເຫມາະສົມຈາກຊາວສວນທີ່ເຂົ້າ ຮ່ວມແລະສະເນີບັດຂອງທ່ານໃຫ້ເບິ່ງ.
3. ຜູ້ປູກຜັກຈະສະແກນ QR ໂຄດຢູ່ໃນບັດຂອງທ່ານດ້ວຍ ໂທຣະສັບຫລືເຄື່ອງໂມໂບຂອງເຂົາເຈົ້າ.
4. ທ່ານຈະກວດເບິ່ງຣາຄາຄືນແລະຕີເລກຊື້ບອກສ່ວນຕົວຂອງ ທ່ານໃສ່ (ເປັນທີ່ຮູ້ຈັກກັນອີກວ່າແມ່ນເລກPIN*) ທ່ານໃສ່ໃນ ເຄື່ອງຂອງຜູ້ປູກຜັກເພື່ອຈະຮັບເອົາການຊື້ຂາຍ.
5. ຊາວສວນຈະຢືນຢັນການຊື້ຂອງທ່ານແລະທ່ານຈະໄດ້ຮັບຜັກສົດ,ທ້ອງຖິ່ນຫລືນ້ຳເຜີ້ງຂອງທ່ານ!
6. ເພື່ອຈະກວດເບິ່ງເງິນຍັງເຫລືອຢູ່ໃນ SFMNP ຂອງທ່ານ,ໂທຫາເລກ **1-844-359-3104** (ມີຢູ່ໃນດ້ານຫລັງຂອງບັດຂອງທານ) ແລະເຮັດຕາມຄຳຊີ້ນຳ.

*ເລກ **PIN** ປະສົມກັນທີ່ຖືກເລືອກໃຫ້ຂອງທ່ານແມ່ນເລກ **4-** ຕົວຂອງເດືອນແລະປີຂອງວັນເກີດຂອງທ່ານ **(MMYY).** ຕົວຢ່າງວ່າ,ຖ້າຫາກ ວ່າວັນເກີດຂອງທ່ານແມ່ນຈຸນລາຍ **4, 1926,** ເລກ **PIN** ຂອງທ່ານຈະແມ່ນ **0726.** ກະຣຸນາໃຊ້ **PIN** ເລກ **4-**ຕົວວັນເກີດນີ້ງດຽວຂອງ ທ່ານສຳລັບການຊື້ຂາຍແຕ່ລະເທື່ອ.ທ່ານຈະປ່ຽນເລກ **PIN** ຂອງທ່ານໄດ້ໂດຍການໂທຫາເລກໂທຣະສັບ **"benefit balance"** ຢູ່ດ້ານຫລັງ ຂອງບັດຂອງທ່ານ.

## ຄຳຖາມທີ່ຖືກຖາມກັນຢູ່ເລື້ອຍໆ

| | |
|---|---|
| ຂ້ອຍຈະໄດ້ຮັບສະວັດດີການ SFMNP ໄດ້ແນວໃດ? | ຜູ້ເຂົ້າຮ່ວມຮ້ອງຂໍເອົາເພື່ອຈະໄດ້ຮັບສະວັດດີການ SFMNP ຜ່ານ ຫ້ອງການຊ່ວຍຜູ້ອາວຸໂສທ້ອງຖິ່ນຫລືຜູ້ບໍຣິການອາຫານການກິນໃນທ້ອງຖິ່ນ ຂອງເຂົາເຈົ້າ.ການດຳເນີນການຂອງຄຳຮ້ອງສຳລັບຜູ້ເຂົ້າຮ່ວມແມ່ນຄ້າຍຄືກັນກັບປີຜ່ານມາແລະບົ່ງໃຫ້ມີການຂຽນປະກອບໃບຄຳຮ້ອງຂໍທີ່ຢືນຢັນວ່າຜູ້ອາວຸໂສສອດຄ່ອງນຳກົດກຳນົດເງື່ອນໄຂໄດ້ຮັບ:<br>1. ອາຍຸ: 60 ປີຫລືແກ່ກວ່າ,ຫລື 55+ ປີຖ້າຫາກວ່າທ່ານເປັນຄົນອະເມຣິກັນດັ້ງເດີມ/ອາລາສກາດັ້ງເດີມ;<br>2. ຣາຍໄດ້:ຕ່ຳກວ່າ 185% ຂອງລະດັບຄວາມທຸກຍາກຂອງຣັດຖະບານກາງ;<br>3. ບ່ອນຢູ່ອາສັຍ:ຕ້ອງເປັນຄົນອາສັຍຢູ່ຂອງຣັດວໍຊິງຕັນ. |
| ຂ້ອຍຈະສາມາດຊື້ເອົາຫຍັງໄດ້ແດ່ດ້ວຍບັດສະວັດດີການຂອງຂ້ອຍ? | ຫມາກໄມ້,ຜັກ,ນ້ຳເຜີ້ງສົດ,ມີພະລານາມັຍ,ບໍ່ຖືກຈັດແຈງເທື່ອ,ປູກໃນທ້ອງຖິ່ນ,ແລະສະມູນໄພສຳລັບຄົນກິນໄດ້.ອາຫານທີ່ມີເງື່ອນໄຂຕ້ອງບໍ່ຖືກຈັດແຈງຫລືຕຽມໄວ້ຈາກສະພາບທັມມະຊາດຂອງມັນຍົກເວັ້ນແຕ່ສຳລັບການດຳເນີນການເກັບເອົາແລະການລ້າງໃຫ້ສະອາດ.ຫມາກໄມ້ຫລືຜັກແຫ້ງ,ຫລືສະມູນໄພແຫ້ງບໍ່ຖືກຖືວ່າແມ່ນອາຫານທີ່ມີເງື່ອນໄຂ.ຖົ່ງປູກກົກຂອງຫມາກໄມ້ຫລືຜັກ,ຫລືສະມູນໄພປູກໃສ່ຖົ່ງ,ໄຂ່,ຊີ້ນ,ເນີຍ,ແລະອາຫານທະເລຍັງຖືກຖືວ່າບໍ່ແມ່ນອາຫານທີ່ມີເງື່ອນໄຂສຳລັບຈຸດປະສົງຂອງ SFMNP. |
| ແມ່ນຫຍັງແດ່ໄດ້ປ່ຽນແປງແລະເປັນຫຍັງ? | ພໍ່ຄ້າຜູ້ທີ່ພິມແລະຮັບເອົາເຈັ້ຽເຊັກສຳລັບໂຄງການອາຫານການກິນຊາວສວນທົ່ວປະເທດຢຸດການບໍຣິການຂອງເຂົາເຈົ້າໃນທ້າຍປີ 2022. ເຊັກທີ່ຖືກພິມອອກມາບໍ່ແມ່ນທາງເລືອກຕໍ່ໄປອີກແລ້ວສຳລັບໂຄງການຂອງພວກເຮົາ.ບັດ SFMNP ໃຫມ່ໄດ້ຖືກອູ້ມຊູໂດຍພື້ນຮ່າງສະວັດດີການເອເລກໂຕຣນິກທີ່ເອົາການເຂົ້າເຖິງໃຫ້ສຳລັບຫລາຍໆໂຄງການແລະຜູ້ເຂົ້າຮ່ວມຫລາຍພັນຄົນທົ່ວຣັດ. |
| QR ໂຄດແມ່ນຫຍັງ?<br> | QR ໂຄດແມ່ນ "ຄຳຕອບໄວ" ໂຄດທີ່ເຄື່ອງຈັກອ່ານໄດ້ທີ່ຖືກເຮັດດ້ວຍແບບແຜນນີ້ງດຽວຂອງບອກ໌ສີຫລ່ຽມດຳແລະຂາວ (ມີຢູ່ໃນຮູບຂອງບັດຢູ່ຂ້າງລຸ່ມນີ້) .ໂຄດນີ້ງດຽວອັນນີ້ເກັບເອົາຣາຍຣະອຽດໄວ້,ເຊັ່ນວ່າຣາຍຣະອຽດຂອງສະວັດດີການທີ່ສາມາດຖືກສະແກນແລະອ່ານເພື່ອຈະຊື້ເອົາອາຫານທີ່ເຫມາະສົມ. |

| | |
|---|---|
| ຂ້ອຍຈະສາມາດໃຊ້ສະວັດດີການ **SFMNP** ໄດ້ຢູ່ໃສ? | ຊອກເບິ່ງປ້າຍຂອງ WIC/Senior FMNP "Benefits Welcome Here" :ໃຊ້ສະວັດດີການ SFMNP ນຳຜູ້ປູກຜັກທີ່ຖືກອະນຸຍາດຢູ່ຕາມຕະລາດຊາວສວນທີ່ເຂົ້າຮ່ວມນຳ,ຫ້າງຂາຍຜັກ,ແລະຫ້າງຕັ້ງຕາມຄິມຖນົນ.ລາຍຊື່ຂອງຕະລາດຊາວສວນທີ່ຖືກອະນຸຍາດແລະຫ້າງຕັ້ງຂາຍຕາມຄິມຖນົນສາມາດຖືກພົບເຫັນຢູ່ທີ່ນີ້: https://www.dshs.wa.gov/altsa/home-and-community-services/senior-farmers-market-nutrition-program |
| ແມ່ນຫຍັງຈະເກີດຂຶ້ນຖ້າຫາກວ່າບັດຂອງຂ້ອຍຖືກເສັຽໄປຫລືຖືກຂີ້ລັກໄປ? | ບັດທີ່ຖືກເສັຽໄປຫລືຖືກຂີ້ລັກໄປຈະຖືກເຮັດແທນໄດ້.ກະຣຸນາໂທຫາຜູ້ປະສານງານຫ້ອງການ SFMNP ທ້ອງຖິ່ນຂອງທ່ານ (https://www.dshs.wa.gov/altsa/home-and-community-services/senior-farmers-market-nutrition-program-contacts) ຫລື ເລກພະແນກປະຊາສັມພັນຢູ່ດ້ານຫລັງຂອງບັດຂອງທ່ານ (1-800-841-1410) ຖ້າຫາກວ່າທ່ານມີຄຳຖາມກ່ຽວກັບການດຳເນີນການອັນນີ້. |
| ຂ້ອຍສາມາດກວດເບິ່ງສະວັດດີການ **SFMNP** ທີ່ຍັງເຫລືອຢູ່ຂອງຂ້ອຍໄດ້ບໍ່? | ແມ່ນ. ກວດເບິ່ງເງິນຍັງເຫລືອຢູ່ໃນບັດ SFMNP ຂອງທ່ານໂດຍການໂທຫາ 1-844-359-3104 ແລະຕຽມບັດຂອງທ່ານໄວ້ເວລາທ່ານໂທໄປ.ເລກໂທຣະສັບອັນນີ້ຍັງມີຢູ່ທາງຫລັງຂອງບັດສະວັດດີການ SFMNP ຂອງທ່ານອີກຄືກັນ. |
| ຂ້ອຍສາມາດເລືອກເອົາທີ່ຈະໄດ້ຮັບເຊັກເປັນເຈັ້ຽແທນທີ່ໄດ້ບໍ່? | ບໍ່ໄດ້. ເຊັກເປັນເຈັ້ຽຈະບໍ່ຖືກເຮັດອອກໃຫ້ຕໍ່ໄປອີກແລ້ວສຳລັບໂຄງການອັນນີ້.ທ່ານຍັງສາມາດທຳການຊື້ເອົາໄດ້ອີກຄືກັນເປັນຈຳນວນອື່ນນອກຈາກເປັນຈຳນວນເພີ້ມຂຶ້ນເທື່ອລະ $4, ຊຶ່ງເປັນສະວັດດີການໃຫມ່ດ້ວຍການປ່ຽນແປງອັນນີ້. |
| ຂ້ອຍຈະຕ້ອງການຄອມພິວເຕີຫລືສະມາດໂຟນບໍ່? | ບໍ່. ເມື່ອເວລາທ່ານຊື້ເອົາອາຫານທີ່ເຫມາະສົມ,ຊາວສວນຜູ້ທີ່ຮັບເອົາສະວັດດີການຂອງທ່ານຈະມີໂທຣະສັບຫລືເຄື່ອງໂມໄບທີ່ສາມາດດຳເນີນການໃນສະວັດດີການຂອງທ່ານ.ທ່ານບໍ່ໄດ້ຖືກບົ່ງໃຫ້ມີສະມາດໂຟນຫລືຄອມພິວເຕີເພື່ອຈະໃຊ້ບັດຂອງທ່ານ. |
| ຖ້າຫາກວ່າຂ້ອຍຈ່າຍກາຍເກີນເງິນຍັງເຫລືອຢູ່ໃນບັດຂອງຂ້ອຍເດ? | ຖ້າຫາກວ່າທ່ານພະຍາຍາມທີ່ຈະທຳການຊື້ເອົາຫລາຍກວ່າສະວັດດີການທີ່ຍັງເຫລືອຢູ່ຂອງທ່ານ.ຊາວສວນຈະຖືກແຈ້ງບອກວ່າມັນບໍ່ມີເງິນພຽງພໍເພື່ອຈະທຳການຊື້ເອົາ.ເງິນທີ່ຍັງເຫລືອຢູ່ຂອງທ່ານຈະຖືກສະແດງໃຫ້ເຫັນ,ແລະທ່ານຈະດັດແປງການຊື້ຂອງທ່ານໄດ້ນຳຊາວສວນ,ຫລືຈ່າຍໂດຍການໃຊ້ແບບວິທີທີ່ຮັບເອົາໄດ້ຢ່າງອື່ນ (ເງິນສົດຫລືເຄຣດິດ,ເປັນຕົວຢ່າງ) ເພື່ອຈະເຮັດການຊື້ຂາຍໃຫ້ແລ້ວ. |
| ຂ້ອຍສາມາດໄດ້ບັດໃຫມ່ອີກບໍ່? | ບັດທີ່ຖືກເສັຽໄປຫລືຖືກຂີ້ລັກໄປຈະຖືກເຮັດໃຫມ່ແທນໄດ້.ທ່ານຈະໄດ້ຮັບພຽງແຕ່ສະວັດດີການຊຸດດຽວເທົ່ານັ້ນຕໍ່ປີ. |
| ຖ້າຫາກວ່າເລກ **PIN** ຂອງຂ້ອຍບໍ່ທຳງານເດ? | ເລກ PIN ທີ່ຖືກເຮັດຂຶ້ນມາເອງຂອງທ່ານແມ່ນເລກລວມເດືອນແລະປີຂອງວັນເກີດຂອງທ່ານ (ດດປປ) .ຖ້າຫາກວ່າເລກ PIN ຂອງທ່ານບໍ່ທຳງານ,ກະຣຸນາໂທຫາເລກໂທຣະສັບປະຊາສັມພັນຢູ່ດ້ານຫລັງຂອງບັດຂອງທ່ານ—1-800-841-1410. ຫລັງຈາກທີ່ທ່ານໂທຫາເລກໂທຣະສັບກວດເບິ່ງເງິນຍັງເຫລືອຢູ່ດ້ານຫລັງຂອງບັດຂອງທ່ານ,ທ່ານຈະປ່ຽນເລກ MMYY PIN ໄປໃສ່ເລກ 4-ຕົວໃຫມ່ໄດ້ໂດຍການເຮັດຕາມຄຳຊີ້ບອກ.ກະຣຸນາຈື່ເລກ PIN ຂອງທ່ານໄວ້ສຳລັບການຊື້ເທື່ອຫນ້າ! |



Washington State Department of Social & Health Services
Transforming lives